# ກອງທຶນຫລຸດຜ່ອນຄວາມທຸກຍາກແຂວງ ຜົ້ງສາລີ
# (ປະກາດຮັບສະໝັກພະນັກງານ)

**ປະເທດ:** **ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ໂຄງການ:** **ກອງທຶນຫລຸດຜ່ອນຄວາມທຸກຍາກ**
**ຕຳແໜ່ງ:** **ຜູ້ປະສານງານໂຄງການ ຂັ້ນແຂວງ (ຜົ້ງສາລີ)**
**ທຶນຊ່ວຍເຫລືອເລກທີ:** H685-LA
**ໂຄງການເລກທີ:** P 123480
**ວັນທີເປີດຮັບສະໝັກ:** **17 ພຶດສະພາ 2016** **ວັນທີປິດຮັບສະໝັກ:** **31 ພຶດສະພາ 2016.**

ກອງທຶນຫລຸດຜ່ອນຄວາມທຸກຍາກ ເປັນໂຄງການໜຶ່ງທີ່ຂຶ້ນກັບລັດຖະບານ ກໍ່ຄືຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ, ຫ້ອງວ່າການລັດຖະບານ ໄດ້ຮັບທຶນຊ່ວຍເຫລືອຈາກທະນາຄານໂລກ, ອົງການຮ່ວມມືດ້ານການພັດທະນາປະເທດສະວິດເຊີແລນ, ອົງການຊ່ວຍເຫລືອອົດສ໌ຕາລີ ແລະ ກອງທຶນພັດທະນາສັງຄົມຂອງຍີ່ປຸ່ນ ເພື່ອສະໜອງພື້ນຖານໂຄງລ່າງຂະໜາດນ້ອຍ ແລະ ສ້າງຄວາມເຂັ້ມແຂງໃຫ້ປະຊາຊົນຢູ່ກຸ່ມບ້ານທີ່ທຸກຍາກ ລວມທັງກິດຈະກຳປັບປຸງຊີວິດການເປັນຢູ່ ເພື່ອເຊື່ອມສານດ້ານໂພຊະນາການ (ຄປພ). ທລຍ ໄດ້ຮັບການສືບຕໍ່ໂຄງການໄລຍະທີສອງ (2012-2016) ຊຶ່ງປະຈຸບັນມີຄວາມຕ້ອງການ ພະນັກງານ **ຜູ້ປະສານງານໂຄງການ ຂັ້ນແຂວງ 01** ຕຳແໜ່ງ **ປະຈຳ ຢູ່ຫ້ອງການ ທລຍ ແຂວງ ຜົ້ງສາລີ** ລາຍລະອຽດດັ່ງລຸ່ມນີ້:

**<u>ໜ້າທີ່ ແລະ ຄວາມຮັບຜິດຊອບຫລັກ</u>:**

- ວາງແຜນ, ຕິດຕາມ, ກວດກາ ແລະ ປະສານສົມທົບກັບທີມງານ ໃນການຈັດຕັ້ງປະຕິບັດວຽກງານຕ່າງໆຂອງໂຄງການຢູ່ຂັ້ນແຂວງ/ເມືອງ ເພື່ອຮັບປະກັນໃຫ້ທຸກກິດຈະກຳສຳເລັດຕາມກຳນົດເວລາ ແລະ ມີຄຸນນະພາບສູງ
- ກະກຽມແຜນງົບປະມານ ແລະ ກວດກາຕິດຕາມການຄຸ້ມຄອງບໍລິຫານດ້ານການເງິນ ແລະ ຊັບສົມບັດຂອງໂຄງການຢູ່ຂັ້ນແຂວງ ແລະ ເມືອງ
- ຊ່ວຍເຫລືອໃນການຈັດຕັ້ງປະຕິບັດໂຄງການຍ່ອຍ ແລະ ແກ້ໄຂບັນຫາ ພ້ອມທັງໃຫ້ຄຳແນະນຳແກ່ ທີມງານເພື່ອເຮັດໃຫ້ຂະບວນການປະຕິບັດໂຄງການມີຄວາມສະດວກ, ມີຄຸນນະພາບ ແລະ ດຳເນີນໄປຕາມແຜນທີ່ກຳນົດໄວ້
- ປະສານສົມທົບ ແລະ ຮ່ວມມືຢ່າງໃກ້ຊິດກັບການນຳຂັ້ນແຂວງ ແລະ ທຸກໆພະແນກການທີ່ກ່ຽວຂ້ອງເພື່ອຈັດຕັ້ງປະຕິບັດບັນດາກິດຈະກຳຂອງກອງທຶນຫລຸດຜ່ອນຄວາມທຸກຍາກ
- ປະເມີນເບິ່ງທ່າແຮງ ແລະ ຄວາມສາມາດຂອງທີມງານຂັ້ນແຂວງ, ຂັ້ນເມືອງ, ຂັ້ນກຸ່ມບ້ານ ແລະ ຂັ້ນບ້ານທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງກອງທຶນ ພ້ອມທັງອອກແບບວິທີການປັບປຸງ ຫລື ສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດຕັ້ງດັ່ງກ່າວຕາມຄວາມເໝາະສົມ.
- ຮັບຜິດຊອບໃນການລາຍງານຜົນຄວາມຄືບໜ້າ ກ່ຽວກັບການຈັດຕັ້ງປະຕິບັດກິດຈະກຳຂອງກອງທຶນຢູ່ໃນແຂວງປະຈຳງວດ ຫລື ປະຈຳປີ ໃຫ້ທັນກັບກຳນົດເວລາທີ່ວາງໄວ້ ຢ່າງຄົບຖ້ວນ ແລະ ໃຫ້ໄດ້ຮັບຜົນດີ.
- ປະກອບສ່ວນໃນການສ້າງລະບົບຕິດຕາມການພັດທະນາຊົນນະບົດທີ່ຍືນຍົງ ແລະ ຮັບປະກັນໃນການກະຈາຍຂໍ້ມູນຂ່າວສານ ແລະ ປະສານງານດ້ານການພັດທະນາຊົນນະບົດໃຫ້ພາກສ່ວນຕ່າງໆທີ່ເປັນຄູ່ ຮ່ວມໃນການພັດທະນາດ້ວຍກັນ.
- ປະຕິບັດໜ້າທີ່ອື່ນໆ ຕາມຄວາມຮຽກຮ້ອງຕ້ອງການຂອງໂຄງການ.

**ຄຸນວຸດທິ ແລະ ປະສົບການ:**

- ຮຽນຈົບດ້ານບໍລິຫານລັດ ຫລື ບໍລິຫານທຸລະກິດ, ສັງຄົມວິທະຍາ, ວິສະວະກໍາ, ການພັດທະນາ ຫລື ຂະແໜງການທີ່ກ່ຽວຂ້ອງອື່ນໆ
- ມີປະສົບການຢ່າງໜ້ອຍ 5-7 ປີ ກ່ຽວກັບການຄຸ້ມຄອງບໍລິຫານວຽກພັດທະນາຊົນນະບົດ ຊຶ່ງລວມມີການວາງແຜນ, ການຄຸ້ມຄອງບໍລິຫານງົບປະມານ, ການຈັດຕັ້ງປະຕິບັດ, ການລາຍງານ ແລະ ຕິດຕາມປະເມີນຜົນໂຄງການ.
- ມີຄວາມສາມາດ ແລະ ປະສົບການໃນການຄຸ້ມຄອງບໍລິຫານພະນັກງານ
- ສາມາດຄຸ້ມຄອງບໍລິຫານຫ້ອງການ ຊຶ່ງລວມມີ ການກວດກາວຽກງານບໍລິຫານ ແລະ ການເງິນ, ການຈັດຕັ້ງ ແລະ ອຸປະກອນຫ້ອງການ ແລະ ການນໍາໃຊ້ຊັບສົມບັດຄົງທີ່ຂອງໂຄງການ.
- ມີປະສົບການກ່ຽວກັບການເຮັດວຽກພັດທະນາຊົນນະບົດ, ການວາງແຜນແຕ່ລຸ່ມຂຶ້ນເທິງ, ການພັດທະນາແບບມີສ່ວນຮ່ວມ.
- ມີປະສົບການໃນການປະສານງານກັບອໍານາດການປົກຄອງ ຂັ້ນແຂວງ ແລະ ເມືອງ, ຂະແໜງການທີ່ກ່ຽວຂ້ອງ ແລະ ອົງການສື່ມວນຊົນຕ່າງໆ
- ມີຄວາມຮູ້ດ້ານພາສາອັງກິດໃນລະດັບປານກາງ
- ຮູ້ນໍາໃຊ້ຄອມພິວເຕີ ເພື່ອຂຽນບົດລາຍງານ ໂດຍນໍາໃຊ້ MS word, MS Excel ແລະ ອື່ນໆ

**ເງື່ອນໄຂອື່ນໆ ທີ່ຕ້ອງການ:**

- ມີທັດສະນະ ແລະ ຄຸນສົມບັດໃນການເປັນຜູ້ນໍາພາທີ່ດີ (ມີຫລັກໝັ້ນດ້ານສິລະທໍາ, ເປັນກາງ ແລະ ໂປ່ງໃສ, ມີການວິເຄາະ, ພິຈາລະນາ ແລະ ແກ້ໄຂບັນຫາໄດ້ດີ, ກ້າຕັດສິນໃຈ,...)
- ສາມາດເຮັດວຽກແບບອິດສະຫລະ, ສາມາດເຮັດວຽກພາຍໃຕ້ຄວາມກົດດັນ ຕາມຄວາມຮຽກຮ້ອງຕ້ອງການອັນຮີບດ່ວນຂອງໂຄງການ ແລະ ພາຍໃຕ້ການຄວບຄຸມ ແລະ ຊີ້ນໍາຈາກຂັ້ນເທິງໜ້ອຍທີ່ສຸດ.
- ສາມາດເດີນທາງໄປເຮັດວຽກໃນເຂດຫ່າງໄກສອກຫລີກ
- ສາມາດສື່ສານພາສາຊົນເຜົ່າໃດໜຶ່ງທີ່ນໍາໃຊ້ກັນຢູ່ໃນທ້ອງຖິ່ນ ແຂວງ ຜົ້ງສາລີ ຈະໄດ້ຮັບການພິຈາລະນາເປັນພິເສດ.
- ຜູ້ສະໝັກທີ່ເປັນເພດຍິງ ຫລື ຊົນເຜົ່າຈະໄດ້ຮັບການພິຈາລະນາເປັນພິເສດ

**ເອກະສານຍື່ນສະໝັກປະກອບມີ:**

ໃບຄໍາຮ້ອງສະໝັກງານຂຽນດ້ວຍຕົນເອງ ເຊິ່ງລະບຸຊື່ຕໍາແໜ່ງ, ບ່ອນປະຈໍາການ ແລະ ຄວາມຮູ້ຄວາມສາມາດ ປະສົບການທີ່ສອດຄ່ອງຄວາມຕ້ອງການ, ຊີວະປະຫວັດຂອງຜູ້ສະໝັກ ທີ່ລະບຸກ່ຽວກັບປະສົບການຜ່ານມາຢ່າງລະອຽດ ພ້ອມດ້ວຍລາຍລະອຽດຂອງຜູ້ຢັ້ງຢືນ 03 ທ່ານ (ຊື່, ຕໍາແໜ່ງ, ໂທລະສັບ), ສໍາເນົາໃບຜ່ານງານ, ໃບແຈ້ງໂທດ, ບັດປະຈໍາຕົວ ຫລື ປື້ມສໍາມະໂນຄົວ, ພ້ອມດ້ວຍຮູບຖ່າຍບໍ່ກາຍ 3 ເດືອນ ຂະໜາດ 3X4 01 ໃບ ໄປທີ່: **ຫ້ອງການ ທລຍ ຜົ້ງສາລີ ຊຶ່ງຕັ້ງຢູ່ຕຶກໂຮງໝໍເກົ່າ ( ສູນບໍາບັດຄົນຕິດຢາເສບຕິດ), ບ້ານ ນາຕຸ່ນ ເມືອງ ຂວາ ແຂວງ ຜົ້ງສາລີ ເບີຕິດຕໍ່: ນາງ ພອນສັກ ພັນທະສິດ 088 210824. ຫລື ສົ່ງມາຫ້ອງການ ທລຍ ສູນກາງ ທີ່ນະຄອນຫລວງວຽງຈັນ ຕັ້ງຢູ່ຫ້ອງວ່າການລັດຖະບານ, ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ, ໂທລະສັບ 021 261 479-80, ແຟັກ 021 261481. Email:** pienggeune@prflaos.org **or** Khemphone@prflaos.org.

ກະລຸນາຮັບຊາບວ່າ ກອງທຶນຈະທໍາການຕິດຕໍ່ຫາຜູ້ທີ່ເໝາະສົມ ແລະຖືກຕ້ອງຕາມເງື່ອນໄຂທີ່ຄົບຖ້ວນເທົ່ານັ້ນ ເພື່ອດໍາເນີນຂະບວນການປະເມີນ. (ເອກະສານສະໝັກທຸກຢ່າງຈະບໍ່ອະນຸຍາດໃຫ້ຖອນຄືນ).